July 2008--Lao

## ກົມດັບເພີງແຫ່ງຊີແອດເຕີ້ນ

# ການປ້ອງກັນໄຟໄໝ້ບ້ານ

---

ສັນຍານເຕືອນໄຟໄໝ້

☐ ອຸປະກອນທີ່ກວດຈັບຄວັນໄຟແລະສິ່ງສຽງສັນຍານເພື່ອໃຫ້ຫຼົບໜີ.

☐ ທຸກບ້ານຄວນມີສັນຍານເຕືອນໄຟໄໝ້ຢ່າງໜ້ອຍໜຶ່ງເຄື່ອງໃນທຸກຊັ້ນຂອງບ້ານ.

☐ ຢ່າຖອດແບດເຕີລີຂອງຈາກເຄື່ອງສັນຍານເຕືອນໄຟໄໝ້ ເວັ້ນແຕ່ວ່າ ທ່ານຈະຕ້ອງການປ່ຽນໃສ່ອັນໃໝ່.

☐ ເຄື່ອງສັນຍານເຕືອນໄຟໄໝ້ບາງເຄື່ອງມີແບດເຕີລີຊຶ່ງຈຳເປັນຕ້ອງໄດ້ປ່ຽນ. ຖ້າວ່າ ມັນມີສຽງດັງ "ຈອກແຈກ", ໃຫ້ປ່ຽນແບດເຕີລີ.

☐ ທົດສອບສັນຍານເຕືອນໄຟໄໝ້ຂອງທ່ານທຸກເດືອນເພື່ອໃຫ້ໝັ້ນໃຈວ່າມັນມີສຽງສັນຍານເຕືອນ.

ການປຸງແຕ່ງອາຫານ

☐ ຢ່າປະການປຸງແຕ່ງອາຫານໄວ້ໂດຍບໍ່ມີຄົນເຝົ້າ.

☐ ຮັກສາໃຫ້ເຕົາສະອາດແລະນຳໃຊ້ເພື່ອການຄົວກິນເທົ່ານັ້ນ.

☐ ຖ້າວ່າ ມີໄຟໄໝ້ທີເກີດຈາກໄຂນ້ຳມັນ, ຈົ່ງປິດເຕົາແລະເອົາຝາປິດກະທະ. ຈົ່ງຢ່າໃຊ້ນ້ຳມອດໄຟ!

ເຄື່ອງເຮັດຄວາມຮ້ອນ

☐ ຈົ່ງເກັບມ້ຽນສິ່ງຂອງຕ່າງໆໃຫ້ໄກຈາກເຄື່ອງເຮັດຄວາມຮ້ອນທຸກຊະນິດ.

☐ ປິດເຄື່ອງເຮັດຄວາມຮ້ອນແບບເຄື່ອນທີ່ໄດ້ ເມື່ອທ່ານອອກຈາກບ້ານ ຫຼືເຂົ້ານອນ.

☐ ຢ່າໃຊ້ກໍ້ສາຍໄຟຕໍ່ສຳຫຼັບເຄື່ອງເຮັດຄວາມຮ້ອນແບບເຄື່ອນທີ່ໄດ້.

ສານພິດຄາບອນ ໂມນັອກໄຊ

☐ ເຄື່ອງໃຊ້ໄຟຟ້າແລະເຄື່ອງຈັກບາງຊະນິດເຮັດໃຫ້ເກີດແກ໊ສພິດຊຶ່ງບໍ່ສາມາດເຫັນ ຫຼືໄດ້ກິ່ນ.

☐ ຢ່າໃຊ້ເຄື່ອງຂອງຕໍ່ໄປນີ້ພາຍໃນ ບ້ານ, ໂຮງຈອດຣົຖ ແລະບ່ອນອັບ, ຫຼືນອກໜ້າຕ່າງ ຊຶ່ງໄດ້ແກ່: ເຄື່ອງກຳເນີດໄຟ, ເຕົາປີ້ງແບບໃຊ້ຖ່ານ, ເຕົາສຳລັບແຄ້ມ, ຣົຖ ຫຼື ເຄື່ອງຈັກທີ່ໃຊ້ແກ໊ສອື່ນໆ.

☐ ຢ່າໃຊ້ເຕົາແກ໊ສເພື່ອເຮັດໃຫ້ບ້ານຂອງທ່ານອຸ່ນ, ເຖິງວ່າຈະເປັນເວລາຊ່ວງສັ້ນໆ ກໍ່ຕາມ.

ຖ້າວ່າ ເກີດໄຟໄໝ້**—**

☐ ໃຫ້ທຸກຄົນອອກໄປຂ້າງນອກ.

☐ ໄປບ່ອນນັດພົບປະກັນສຳລັບຄອບຄົວ.

☐ ໂທຣ 9-1-1 ເພື່ອຂໍຄວາມຊ່ວຍເຫຼືອ.

☐ ຢ່າກັບຄືນເຂົ້າໄປໃນບ້ານ ຫຼືຕຶກອາຄານ ທີ່ກຳລັງຖືກໄຟໄໝ້.

ເມື່ອທ່ານໂທຣຫາ **911—**

☐ ໂທຣ 9-1-1 ສຳລັບເຫດສຸກເສີນ. ໂທຣເພື່ອແຈ້ງໄຟໄໝ້, ຂໍຄວາມຊ່ວຍເຫຼືອດ້ານການແພດ ແລະເພື່ອແຈ້ງຕຳຫລວດ ເທົ່ານັ້ນ. ການໂທຣ 9-1-1 ແມ່ນຟຣີ.

☐ ຖ້າວ່າ ທ່ານເວົ້າພາສາອັງກິດບໍ່ໄດ້, ພະຍາຍາມບອກພະນັກງານຮັບໂທຣະສັບວ່າ ທ່ານເວົ້າພາສາຫຍັງ ເພື່ອໃຫ້ເຂົາເຈົ້າຫານາຍພາສາມາຊ່ວຍທ່ານ.

☐ ຈົ່ງກຽມພ້ອມທີ່ຈະບອກວ່າ ເຫດສຸກເສີນນັ້ນເປັນແນວໃດ ແລະບ່ອນເກີດເຫດຢູ່ໃສ.

ທີ່ຢູ່ຂອງຂ້ອຍແມ່ນ:

________________________________________________